# ພາຍໃຕ້ກົດໝາຍ ຣັຖບານກາງຮ່ວມ ກັບກົດໝາຍຣັຖມິນນີໂຊຕາ ກ່ຽວກັບສິດທິ ຂອງຄົນໄຂ້ທີ່ອາສັຍຢູ່ໃນສຖານທີ່ເບິ່ງແຍງຮັກສາ

# (Your Rights Under The Combined Federal and Minnesota Residents Bill of Rights-Lao)

**ກ່ອນທີ່ທ່ານຈະອ່ານ ເອກກະສານນີ້ ທ່ານຄວນຈະຮູ້:**

ໃນເອກກະສານນີ້, ຄຳສັບ "ທ່ານ" ໝາຍເຖິງຕົວຂອງທ່ານເອງ, ຜູ້ຕ່າງໜ້າທ່ານ, ແລະ ຜູ້ທີ່ຖືກ ແຕ່ງຕັ້ງ ໂດຍຖືກຕ້ອງ ຕາມກົດໝາຍຂອງຣັຖມິນນີໂຊຕາ.
ຖ້າທ່ານຢູ່ອາສັຍໃນບ້ານ ພັກຄົນຊາຣາບ່ອນໃດນຶ່ງ, ສຖານທີ່ຮັກສາຄົນຊາຣາ ອັນໃດ ນຶ່ງ, ຫຼື ສຖານທີ່ປິ່ນປົວຮັກສາຄົນຊາຣາອື່ນ, ທ່ານມີສິດ ທີ່ຈະ ໄດ້ຮັບສິດທິເຫຼົ່ານີ້.
ແລະທ່ານຍັງມີ ສິດທີ່ ຈະໄດ້ຮັບ ສິດທິເຫຼົ່ານີ້ ຖ້າທ່ານຢູ່ອາສັຍຢູ່ໃນສະຖາບັນກິນນອນ ຫຼືດູແລຊຶ່ງມີໂຄງການປິ່ນປົວ ຢາເສພຕິດ ທີ່ ອະນຸຍາດ ໂດຍກະຊວງປະຊາ ສົງເຄາະ ຂອງຣັຖມິນນີໂຊຕາ. ຈະບໍ່ມີສຖານ ບັນໃດຮຽກຮ້ອງໃຫ້ທ່ານຕ້ອງ ສລະສິດ ທິເຫຼົ່ານີ້ ໂດຍໃຊ້ເປັນເງື່ອນໄຂ ຕໍ່ການເຂົ້າອາສັຍຫຼືຢູ່ອາສັຍຕໍ່ໄປ. ສິດທິບາງຢ່າງ ສັງກັດ ພາຍໃຕ້ກົດໝາຍຣັຖມິນນີໂຊຕາ ເຫຼົ່ານັ້ນ. ສິດເຫຼົ່ານີ້ຈະໄດ້ພິມເປັນສີເຂັ້ມ.

ສິດທິອື່ນໆບົ່ງໄວ້ພາຍໃຕ້ກົດໝາຍຣັຖບານກາງແລະນຳໃຊ້ໄດ້ຕໍ່ບຸກຄົນ ອາສັຍ ຢູ່ສະຖາບັນທີ່ເບິ່ງແຍງໄດ້ຮັບ ອະນຸຍາດ ຈາກໂຄງການຊ່ວຍເຫຼືອ ພຍາບານເມດີເຄ ຫຼືເມດີແຄ. ຖ້າສິດທິຂອງທ່ານພາຍໃຕ້ຣັຖມິນນີໂຊຕາ ຄ້າຍຄືກັນກັບ ສິດທິທີ່ບົ່ງ ໄວ້ໃນກົດໝາຍຣັຖບານກາງກໍຈະໄດ້ຖືເອົາສິດທິ ແຫ່ງຣັຖບານກາງ ນັ້ນເລີຍ.
ກົດໝາຍເພີ່ມຕື່ມ ບາງຢ່າງ ພາຍໃນກົດໝາຍແຫ່ງຣັຖນັ້ນ ຈະໄດ້ພິມ ອອກເປັນ ໜັງສືຕົວເນັ້ງ.

ຖ້າທ່ານຢາກຈະໄດ້ຮ່າງກົດໝາຍສະບັບທີ່ສົມບູນແບບວ່າດ້ວຍສິດທິແຫ່ງຣັຖມິນນີໂຊຕາ ຍັງມີຫຼາຍສະບັບ ຢູ່ຕາມ ສະຖານທີ່ຮັກສາ ເບິ່ງແຍງຂອງທ່ານ. ພນັກງານ ໃນສຖານທີ່ນັ້ນ ສາມາດຊ່ວຍຊອກຄົ້ນເອົາມາໃຫ້ທ່ານໄດ້.

**ຄຸນນະພາບຊີວິດ**
ສຖານທີ່ຮັກສາເບິ່ງແຍງຈະຕ້ອງເບິ່ງແຍງທ່ານໃນລັກສະນະແລະສິ່ງແວດລ້ອມທີ່ສົ່ງເສີມຄຸນະພາບຊີວິດຂອງທ່ານ ໃຫ້ສົມບູນຫຼືດີຂື້ນກວ່າເກົ່າ.

**1. ກຽດແລະສັກສີ**.ໃນສຖານທີ່ຮັກສາເບິ່ງແຍງນັ້ນຈະຕ້ອງສົ່ງເສີມແລະເບິ່ງແຍງໃຫ້ກຽດໃນ ທຳນອງແລະ ສິ່ງແວດລ້ອມທີ່ຮັກສາແລະສົ່ງເສີມກຽດແລະສັກສີພ້ອມຄວາມນັບຖືຂອງທ່ານ ໂດຍຮັບຮູ້ບຸກຄະລິກລັກສະນະ ຂອງທ່ານຢ່າງສົມບູນ. **ທ່ານມີສິດທີ່ຈະໄດ້ຮັບການປິ່ນປົວແລະການເບິ່ງແຍງເປັນສ່ວນຕົວ.** (**ລວມທັງ ການໂອ້ລົມກ່ຽວກັບການປິ່ນປົວ, ການໃຫ້ຄຳປຶກສາ, ການກວດ, ການປິ່ນປົວ, ແລະການປະຕິບັດອະນາມັຍເຊັ່ນ ການໃຊ້ສ້ວມຖ່າຍ ແລະການ ອາບນ້ຳ**) **ຍົກເວັ້ນສິ່ງທີ່ຕ້ອງກະທຳເພື່ອຄວາມປອດພັຍ ຂອງທ່ານແລະ ການໃຫ້ ຄວາມຊ່ວຍເຫຼືອທ່ານ**

2. **ການເປັນເຈົ້າຂອງຕົນເອງແລະປະກອບສ່ວນ**. ທ່ານມີສິດເລືອກ ເອົາກິຈະກັມຕ່າງໆ, ຕາຕລາງຕ່າງໆ, ການ ປິ່ນປົວ, ສຳພັນກັບໝູ່ໃນສັງຄົມ,ແລະການເລືອກ ທາງດຳເນີນຊີວິດທ່ານຢູ່ໃນສຖານທີ່ຮັກສາເບິ່ງແຍງທີ່ ທ່ານ ເຫັນວ່າ ສຳຄັນແກ່ທ່ານ. **ທ່ານມີສິດທິ ໃນການເຂົ້າຮ່ວມກິຈະກັມຕ່າງໆໆໃນດ້ານທຸຣະກິດ, ສາສນາ, ການ ເມືອງແລະກຸ່ມສັງຄົມ ຕ່າງໆ ລວມທັງການເຂົ້າຮ່ວມກັບຄົນອື່ນ ເພື່ອການປັບປຸງໃນການປິ່ນປົວ ຮັກສາລະຍະຍາວ ນານ, ໂດຍປັສຈາກ ການກີດກັ້ນໃດໆໃນເມື່ອກິຈະກັມ ຕ່າງໆເຫຼົ່ານັ້ນຫາກບໍ່ແຕະຕ້ອງເຖິງສິດທິ ສ່ວນຕົວຂອງ ຄົນເຈັບ ອື່ນໆ.**

3. **ການປະກອບສ່ວນຮ່ວມກຸ່ມຄົນເຈັບແລະຄອບຄົວ**. ທ່ານມີສິດຈັດຕັ້ງແລະ ປະກອບສ່ວນຮ່ວມກຸ່ມຄົນເຈັບໃນ ສຖານທີ່ຮັກສາເບິ່ງແຍງຄອບຄົວຂອງທ່ານມີສິດ ພົບສ່ວນຕົວ

ຢູ່ສຖານທີ່ຮັກສາເບິ່ງແຍງ ກັບຄອບຄົວຂອງຄົນ ເຈັບອື່ນໆ ທີ່ອາສັຍຢູ່ທີ່ນັ້ນ. ເມື່ອມີການຈັດຕັ້ງກຸ່ມຄົນເຈັບຂື້ນສຖານທີ່ຮັກສາເບິ່ງແຍງ ຕອ້ງຮັບ ຟັງຄຳເຫັນແລະ ປະຕິບັດ ຕາມຄຳຮ້ອງທຸກພ້ອມຄຳແນະນຳຂອງຄົນເຈັບແລະຄອບຄົວກ່ຽວກັບ ນະໂຍບາຍແລະກົດແກນຕ່າງໆ ທີ່ມີຜົນສະທ້ອນ ແກ່ການຮັກສາ ເບິ່ງແຍງແລະຊີວິດ ຂອງຄົນເຈັບໃນສຖານທີ່ນັ້ນ. **ຄນະທີ່ປຶກສາ ຂອງຜູ້ຢູ່ອາສັຍໃນ ສຖານທີ່ຮັກສາ ເບິ່ງແຍງ ແລະຄອບຄົວຄວນຊູກຍູ້ ໃຫ້ປະກອບ ຄວາມຄິດເຫັນ ກ່ຽວກັບນະໂຍບາຍ ຂອງ ສຖານທີ່ຮັກສາເບິ່ງແຍງ.**

4. **ການເຂົ້າຮ່ວມໃນກິຈກັມອື່ນໆ.** ທ່ານມີສິດເຂົ້າຮ່ວມໃນກິຈະກັມສັງຄົມ, ສາສນາ, ແລະປະຊາຄົມຕ່າງໆ ທີ່ບໍ່ແຕະຕ້ອງ ສິດທິຂອງຜູ້ອື່ນທີ່ຢູ່ອາສັຍ ໃນສຖານ ທີ່ຮັກສາ ເບິ່ງແຍງດຽວກັນ.

5. **ການຕອບສນອງຂອງຄວາມຕ້ອງການ.** ທ່ານມີສິດອາສັຍແລະໄດ້ຮັບ ການບໍຣິການ ຕ່າງໆ ຈາກທາງສະຖານທີ່ ເບິ່ງແຍງ ພ້ອມດ້ວຍ ການຕອບສນອງຂອງ ຄວາມຕ້ອງ ການສົມຕາມຄວາມຮຽກຮ້ອງຕ້ອງການ  ແລະຄວາມຊອບ ອັນສົມເຫດ ສົມຜົນ ເວັ້ນເສັຍແຕ່ເມື່ອເວລາສຸຂພາບ ແລະ ຄວາມ ປອດພັຍຂອງທ່ານ ຫຼືຜູ້ຢູ່ອາສັຍ ຄົນອື່ນຈະ ເປັນພັຍອັນຕຣາຍ.

**ການຮັກສາເບິ່ງແຍງ ແລະການປິ່ນປົວ**

6. **ການຮັກສາເບິ່ງແຍງສຸຂພິບານອັນເໝາະສົມ.** ທ່ານມີສິດໄດ້ຮັບການຮັກສາ ເບິ່ງແຍງດ້ານພຍາບານ ແລະ ສ່ວນຕົວ ຕາມຄວາມຕ້ອງການຂອງບຸກຄົນເພື່ອ ໃຫ້ ທ່ານ ມີສຸຂພາບແຂງແຮງແລະສມອງສົດໃສ, ແຕ່ສິດນີ້ຈະມີ ຂໍ້ຈຳກັດໃນເມື່ອວ່າ ການບໍຣິການບໍ່ຖືກຈ່າຍທົດແທນຄືນຈາກອົງການສາທາຣະນະ ຫຼື ເອກກະຊົນ.

7. **ຄວາມສຳພັນກັບການບໍຣິການແລະຜູ້ບໍຣິການຮັກສາປິ່ນປົວອື່ນ.ທ່ານມີສິດຮັບ ເອົາການບໍຣິການຈາກບໍຣິການພາຍນອກແລະໄດ້ຮັບໜັງສືແຈ້ງໃຫ້ຮູ້ວ່າໃຜຈະເຜູ້ ບໍຣິການ ທີ່ຢູ່,ແລະລາຍລະອຽດຂອງການ ບໍຣິການ ຕາມຄຳຮ້ອງຂໍຂອງທ່ານ. ທ່ານມີສິດຊື້ ຫຼືເຊົ່າ ເຄື່ອງອຸປະກອນ ຫຼືການບໍຣິການທີ່ບໍ່ໄກຳນົດເຂົ້າໃນລາຍຈ່າຍ ປະຈຳວັນຂອງຜູ້ບໍຣິການທີ່ທ່ານເລືອກເອົາ ຍົກເວັ້ນແຕ່ຈະມີການຣະບຸໄວ້ໃນ ກົດໝາຍ.**

8. **ການສືບຕໍ່ເນື່ອງການຮັກສາເບິ່ງແຍງ. ທ່ານມີສິດໄດ້ຮັບການຮັກສາເບິ່ງແຍງ ຢ່າງສມ່ຳສເມີແລະຕໍ່ເນື່ອງ ກ່ຽວກັບການຈັດຄົນຮັກສາເບິ່ງແຍງ. ທ່ານເທົ່າທີ່ ນະໂຍບາຍຂອງສຖານທີ່ເບິ່ງແຍງຈະອະນຸຍາດ.**

9. **ການທົບທວນເບິ່ງເອກກະສານ ແລະ ຄວາມຮູ້ກ່ຽວກັບການຮັກສາເບິ່ງແຍງ.** ທ່ານມີສິດເບິ່ງເອກກະສານ ທຸກຢ່າງທີ່ເປັນຂອງທ່ານ ພາຍໃນ 24 ຊົ່ວໂມງ ຫຼັງຈາກ ທີ່ຂໍຮ້ອງ ແລະຄ່າຊື້ໃບສຳເນົາຕາມ ຣາຄາ ບໍ່ເໜືອນ ອັດຕຣາພາບ ເຂດທ້ອງຖິ່ນ. ພາຍໃນ 2 ວັນຫຼັງຈາກຂໍຮ້ອງທາງລາຍລັກອັກສອນ ຕໍ່ສຖານທີ່ເບິ່ງແຍງ. ທ່ານມີສິດ ທີ່ຈະໄດ້ຮັບຮູ້ເປັນພາສາ ຂອງທ່ານເພື່ອ ທ່ານຈະໄດ້ເຂົ້າໃຈ ຢ່າງເຕັມເມັດເຕັມໜ່ວຍ ກ່ຽວກັບສຸຂພາບຂອງທ່ານ.

10. **ການອອກຂໍບັນຍັດລ່ວງໜ້າ.** ທ່ານມີສິດໄດ້ຮັບຂໍ້ມູນເປັນລາຍລັກອັກສອນ ກ່ຽວກັບການອອກ ຂໍ້ບັນຍັດລ່ວງ ໜ້າ. **(ປະຈຸບັນເອີ້ນວ່າ ຂໍ້ບັນຍັດການຮັກສາ ປິ່ນປົວຂອງຣັຖມີນີໂຊຕາ)** ຊຶ່ງ ລວມທັງ ນະໂຍບາຍ ເປັນລາຍລັກ ອັກສອນຂອງ ສຖານທີ່ເບິ່ງແຍງແລະ ກົດໝາຍຣັຖ ພ້ອມດວ້ຍກັບຂໍ້ຮ່າງບັນຍັດລ່ວງໜ້າ.

11. **ນາຍແພດປະຈຳ.** ທ່ານມີສິດທີ່ຈະເລືອກເອົານາຍແພດທີ່ມາປິ່ນປົວປະຈຳ ໃຫ້ທ່ານ. ສຖານທີ່ເບິ່ງແຍງ ຕ້ອງແຈ້ງ ໃຫ້ ທ່ານຮູ້ເຖິງຊື່ຂອງນາຍແພດ ຕລອດເຖິງ ດ້ານຊ່ຽວຊານ ທີ່ຢູ່ແລະເລກໂທຣສັບຫ້ອງການຂອງເພິ່ນ.

12. ຂໍ້ມູນກ່ຽວກັບການປິ່ນປົວ. ທ່ານມີສິດຖືກແຈ້ງກ່ອນລ່ວງໜ້າ ກ່ຽວກັບ ການຮັກສາປິ່ນປົວເບິ່ງແຍງ ຂອງທ່ານ. ນອກຈາກນີ້ແລ້ວ, ນາຍແພດ ປະຈຳຂອງທ່ານນັ້ນກໍຈະຕ້ອງໄດ້ບອກໃຫ້ ທ່ານຮູ້ໝົດທຸກຢ່າງທັງ ອະດີດ ແລະ ປະຈຸບັນ ກ່ຽວກັບຜົນຂອງການກວດວິໃຈສຸຂພາບທ່ານ, ການປິ່ນປົວ, ການປິ່ນ ປົວ ແບບອື່ນ, ການສ່ຽງໄພ, ແລະຄຳທວຍອາການ. ຂໍ້ມູນຕ່າງໆເຫຼົ່ານີ້ຄວນຈະຕ້ອງເປັນພາສາ ທີ່ທ່ານເຂົ້າໃຈ ຫຼືວ່າ ຕອ້ງໄດ້ ແປເປັນ ພາສາ ຂອງທ່ານ ເພື່ອທ່ານຈະໄດ້ເຂົ້າໃຈຢ່າງ ແທ້ຈິງ. ທ່ານມີສິດເອົາສະມາຊິກ ໃນຄອບຄົວ ຫຼື ຕົວແທນຄົນອື່ນຕິດຕາມທ່ານນີ້. ທ່ານມີສິດທີ່ຈະປະຕິເສດ ບໍ່ຮັບ ເອົາຂໍ້ມູນເຫຼົ່ານີ້ໄດ້. ຖ້າຫາກທ່ານ ໄດ້ເປັນ ມະເລັງເຕົ້ານົມຢ່າງໃດຢ່າງນື່ງ, ທ່ານຈະຕ້ອງຖືກແຈ້ງໃຫ້ຮູ້ເຖີງ ການປິ່ນປົວແບບ ອື່ນທີ່ໄດ້ ຜົນພັຍອັນຕະຣາຍ ຂອງວິທີປິ່ນປົວແຕ່ລະຢ່າງ.

13. ການປະກອບສ່ວນໃນການວາງແຜນປິ່ນປົວຮັກສາ. ທ່ານມີສິດ ປະກອບສ່ວນ ໃນການວາງແຜນຮັກສາ ເບິ່ງແຍງ ແລະການປິ່ນປົວ. ສິດທິນີ້ ປະກອບດວ້ຍໂອກາດ ອະພິປາຍການປິ່ນປົວ ການປິ່ນປົວແບບອື່ນ ກັບຜູ້ບໍຣິການແຕ່ລະຄົນ, ໂອກາດຂໍຮ້ອງ ແລະເຂົ້າຣ່ວມການປະຊຸມເຣື່ອງການປິ່ນປົວ ຢ່າງເປັນທາງການ, ແລະລວມທັງສິດ ເອົາສະມາຊິກໃນຄອບຄົວ ຕົວແທນ ຫຼືຄົນອື່ນຕິດຕາມທ່ານໃນກໍຣະນີທີ່ ທ່ານບໍ່ ສາມາດ ເຂົ້າຣວ່ມ. ສະມາຊິກ ຄອບຄົວ ຫຼືຕົວແທນຄົນອື່ນທີ່ທ່ານເລືອກ ສາມາດ ເຂົ້າຣວ່ມກອງປະຊຸມດັ່ງກ່າວ ແທນທ່ານ.

ຖ້າຫາກທ່ານບໍ່ຮູ້ເມື່ອຄືງສລົບຈິດ ຫຼືບໍ່ສາມາດປາກເວົ້າເວລາ ເຂົ້າໄປສຖານທີ່ ເບິ່ງແຍງ, ສຖານທີ່ນັ້ນ ຈະຕ້ອງພຍາຍາມຢ່າງສຸດຄວາມສາມາດ ແຈ້ງເປັນ ລາຍລັກອັນສອນໃຫ້ສະມາຊິກຄອບຄົວ ຫຼືຕົວແທນ ຂອງທ່ານໃຫ້ ເປັນຜູ້ຕິດຕາມ ຕໍ່ໃນກໍຣະນີສຸກເສີນ ແລະອະນຸຍາດໃຫ້ຜູ້ກ່ຽວປະກອບສ່ວນໃນການ ວາງແຜນ ປິ່ນປົວດັ່ງຣະບຸໄວ້ໃນກົດໝາຍຂອງຣັຖ.

14. **ປະກາດໃຫ້ຮູ້ປ່ຽນແປງສພາບຕ່າງໆຂອງທ່ານ.** ທາງສຖານທີ່ເບິ່ງແຍງຈະຕ້ອງໄດ້ປຶກສານຳທ່ານໂດຍທັນທີ ເມື່ອໄດ້ຮັບອຸປະຕິເຫດ ໂດຍໄດ້ຮັບບາດເຈັບ, ຫຼືເມື່ອມີການປ່ຽນແປງສຳຄັນສຳຄັນດ້ານຮ່າງກາຍ, ສມອງ ຫຼືຈິດ ເມື່ອຈຳຕ້ອງ ດັດແປງການປິ່ນປົວ, ການຕັດສິນໃນເຣື່ອງການຍົກຍ້າຍ ຫຼື ການທີ່ຈະໃຫ້ທ່ານ ອອກໄປຈາກສຖານທີ່ນີ້ນັ້ນ ທາງສຖານທີ່ຈະຕ້ອງຕິດຕໍ່ ໄປຍັງ ນາຍແພດຂອງ ທ່ານຜູ້ທີ່ເປັນຕົວແທນທາງກົດໝາຍຂອງທ່ານ ແລະ ສມາຊິກ ໃນຄອບຄົວ ຂອງທ່ານ.

15. **ການປະຕິເສດຕໍ່ການປິ່ນປົວ.** ທ່ານມີສິດປະຕິເສດການປິ່ນປົວ. **ຖ້າຫາກ ທ່ານປະຕິເສດການປິ່ນປົວ, ການໃຊ້ ຢາເພື່ອປິ່ນປົວ, ຫຼືການຄະລຳອາຫານ, ທ່ານຈະຕ້ອງຖືກແຈ້ງໃຫ້ຊາບຢ່າງຄັກວ່າຈະມີ ຜົນສະທ້ອນທາງດ້ານ ພຍາບານ ຫຼືຈິດຕະຫຍັງແດ່ໃນເມື່ອປະຕິເສດການປິ່ນປົວນີ້ ໂດຍບັນໄວ້ໃນ ເອກກະສານສຸຂພິບານຂອງທ່ານ.**

16. **ການກິນແລະສັກຢາດ້ວຍຕົນເອງ.** ທ່ານມີສິດກິນແລະສັກຢາດ້ວຍຕົນເອງຖ້າຫາກກັມການ ພນັກງານ ຂອງສຖານທີ່ເບິ່ງແຍງເຫັນວ່າປອດພັຍ.

## ສິດທິທົ່ວໄປ

ທ່ານມີສິດດຳຣົງຊີວິດຢ່າງມີສັກສີເປັນເຈົ້າຂອງຕົນເອງ, ມີສິດຕິດຕໍ່ເວົ້າລົມກັບ ບຸກຄົນ ແລະ ການບໍຣິການ ທາງນອກຫຼືທາງໃນສຖານທີ່ເບິ່ງແຍງ ສຖານທີ່ ເບິ່ງແຍງ ຕ້ອງປ້ອງກັນແລະສົ່ງເສີມສິດທິຂອງທ່ານຊຶ່ງປະກອບ ດ້ວຍ ສິດທິອື່ນໆດັ່ງຕໍ່ລົງໄປນີ້. **ທ່ານຕ້ອງໄດ້ ຖືກບອກໃຫ້ຮູ້ວ່າທ່ານມີສິດທິຕາມກົດໝາຍ ເພື່ອປ້ອງກັນທ່ານ ດັ່ງ ທີ່ໄດ້ພິມກ່າວໄວ້ໃນເອກກະສານນີ້.**

17. **ການໃຊ້ສິດທິ.** ທ່ານມີສິດໃຊ້ສິດທິຂອງທ່ານໃນນາມທີ່ເປັນຜູ້ຢູ່ອາສັຍ ໃນສຖານທີ່ເບິ່ງແຍງ ແລະໃນນາມທີ່ ເປັນພົລເມືອງຫຼືຄົນອາສັຍຢູ່ສະຫາຣັຖ ແລະສິດທິ ທີ່ປັສະຈາກການລົບກວນ, ການບີບບັງຄັບ, ການຈຳແນກ, ຄວາມບາດໝາງ ຈາກສຖານທີ່ຕໍ່ການໃຊ້ສິດຂອງທ່ານ. ຖ້າຫາກທ່ານໄດ້ຖືກຕັດສິນວ່າບໍ່ສາມາດຊ່ວຍຕົນເອງໄດ້ຕາມກົດໝາຍຣັຖ ສິດຂອງທ່ານຈະຖືກໃຊ້ໂດຍຕົວແທນ ທີ່ຖືກແຕ່ງຕັ້ງ ຕາມກົດໝາຍແຫ່ງຣັຖ ເພື່ອເປັນ ຜູ້ປະຕິບັດໜ້າທີ່ແທນທ່ານ. ຖ້າຫາກວ່າ ທ່ານບໍ່ຖືກ ຕັດສິນຊ່ວຍຕົນເອງໄດ້ຕົວແທນທີ່ແຕ່ງຕັ້ງ ພາຍໄຕ້ກົດໝາຍ ຣັຖສາມາດໃຊ້ສິດ ຂອງທ່ານຕາມຂອບເຂດຂອງກົດໝາຍຣັຖ.

18. **ສິດທິສ່ວນຕົວ. ທ່ານມີສິດໃນທຸກເງື່ອນໄຂກ່ຽວກັບສິດທິສ່ວນຕົວ, ບຸກຄະລິກລັກສະນະ ແລະຮັກສາ ວັທນະທັມທີ່ກ່ຽວພັນກັບການຄົງຢູ່ດ້ານສັງຄົມ ສາສນາ ແລະຈິດຕະນາຂອງທ່ານ. ພນັກງານ ໃນສຖານທີ່ ເບິ່ງແຍງ ກໍຕ້ອງເຄາະປະຕູແລະ ໄດ້ຮັບການ ອະນຸຍາດເສັຍກ່ອນ ຈຶ່ງເຂົ້າມາໃນຫ້ອງ, ຍົກເວັ້ນກໍຣະນີສຸກເສີນ ຫຼື ເມື່ອຫຼີກລຽງບໍ່ໄດ້.**

19. **ການໄດ້ຮັບສິດທິ.** ທ່ານມີສິດໄດ້ຮັບເອກກະສານ ທຸກຢ່າງເປັນພາສາ ທີ່ທ່ານເຂົ້າໃຈດີ ຊຶ່ງກ່າວເຖິງ ສິດທິ ແລະກົດລະບຽບທຸກຢ່າງກ່ຽວການປະພຶດ ປະຕິບັດຂອງທ່ານ ໃນສຖານ ທີ່ເບິ່ງແຍງນັ້ນ. ທ່ານຈະຕ້ອງເຊັນ ຮັບຮູ້ວ່າ ທ່ານໄດ້ຮັບເອກກະສານ ດັ່ງກ່າວ ພ້ອມທັງຂໍ້ເພີ້ມເຕີມທຸກຢ່າງ.

20. **ລາຍລະອຽດກ່ຽວກັບໂຄງການ ເມດີເຄດ ແລະ ເມດີແຄ.** ທ່ານມີສິດ ໄດ້ຮັບໃນເວລາທ່ານເຂົ້າຮັບການປິ່ນປົວ ຫຼື ເມື່ອໃດທີ່ທ່ານມີເງື່ອນໄຂທີ່ຈະ ໄດ້ຮັບ ສິ່ງເຄາະເມດີເຄດ, ເອກກະສານທີ່ບອກໃຫ້ຮູ້ທຸກລາຍການ, ແລະການ ບໍຣິການ ທີ່ເປັນພາກສ່ວນການບໍຣິການຂອງສຖານທີ່ເບິ່ງແຍງພາຍໄຕ້ຮ່າງແຜນ ການຂອງຣັຖ (ຊຶ່ງທ່ານອາດຈະບໍ່ໄດ້ຈັບຈ່າຍ) ທຸກລາຍການແລະ ການບໍຣິການ ທີ່ມີໃຫ້ (ພ້ອມ ຣາຄາທຸກຢ່າງ) ຊຶ່ງ ທ່ານອາດຈະໄດ້ຈັບຈ່າຍ, ລວມທັງຄ່າການ ບໍຣິການ ທີ່ທາງ ເມດີແຄ

ບໍ່ຈັບຈ່າຍຫຼືລາຍຈ່າຍປະຈຳວັນຂອງສຖານທີ່. ທ່ານມີສິດ ໄດ້ຮັບທາງປາກ ເປົ່າ ຫຼື ເປັນທາງໜັງສື ກ່ຽວກັບການຍື່ນໃບຄຳຮ້ອງຂໍ ເມດິແຄ ແລະເມດີເຄດ ພ້ອມທັງ ສິດຂໍຮ້ອງໃຫ້ ເຂດໂຮງການ ເມືອງ ແຈ້ງໃຫ້ ທ່ານ ວ່າການກຳນົດຊັບສິນບັດ ຂອງທ່ານຈະສູງພຽງເທົ່າໃດຈື່ງ ຈະຂໍເອົາ ເມດີເຄດໄດ້, ແລະ ວິທີການຂໍເອົາເງິນຄືນ ຕາມຈຳນວນໃຊ້ຈ່າຍໄປປະກອບແລະຊື່ງທາງ ເມດີແຄ ຮັບຈ່າຍໃຫ້.
**ທ່ານມີສິດທີ່ຈະໄດ້ຮັບ ການຊວ່ຍເຫຼືອຈາກພນັກງານ ຂອງ ສຖານທີ່ເບີ່ງ ແຍງວ່າໂຄງການເມດີແຄຫຼືເມດີແລະຈະຈ່າຍຄ່າ ບໍຣິການ ທັງໝົດຫຼືພຽງແຕ່.**

ທ່ານຫຼືບັນຊີເງິນຂອງທ່ານຈະບໍ່ໄດ້ຈ່າຍຄ່າບໍຣິການຊື່ງທາງເມດີເຄດ ຫຼື ເມດີແຄ ຮັບຈ່າຍໃຫ້. ການບໍຣິການຕ່າງໆເຫຼົ່ານີ້ປະກອບດວ້ຍການບໍຣິການ ພຍາບານ ການ ບໍຣິການດ້ານອາຫານ ກິດຈະກັມຕ່າງໆ ການຮັກສາຄວາມສະອາດ ບ້ານເຮືອນ ແລະ ການບໍຣິການດ້ານສິ່ງເຄາະທີ່ກ່ຽວພັນກັບດ້ານສຸຂພິບານ ແລະຂອງໃຊ້ ພ້ອມການ ບໍຣິການດ້ານອະນາມັຍທີ່ມີຄວາມຈຳເປັນຕໍ່ທ່ານ.

"ຂອງໄຊ້ແລະການບໍຣິການດ້ານອະນາມັຍ" ປະກອບດວ້ຍ:

- ຂອງໃຊ້ອະນາມັຍສຳຣັບຜົມ, ຫວີ, ຝອຍຫວີຜົມ, ເຂັມຄັດ, ຂອງແຖໜວດ, ສະບູແຖໜວດ,
- ສະບູອາບນ້ຳ, ສະບູຂ້າພະຍາດ, ຫຼືເຄື່ອງທຳຄວາມສະອາດພິເສດທີ່ຊີ້ ບອກໃຫ້ໃຊ້ ໃນການປິ່ນປົວບັນຫາທາງຜິວໜັງ ຫຼື ຕ້ານການອັກເສບອື່ນໆ,
- ຝອຍຖູແຂ້ວ, ຢາຖູແຂ້ວ, ຢາງຈອດແຂ້ວປອມ, ເຄື່ອງທຳຄວາມສະອາດ ແຂ້ວປອມ, ເຊືອກຖູແຂ້ວ,
- ຄຣີມທາຜີວບໍ່ໃຫ້ແຫ້ງ,
- ເຈັ້ຍອະນາມັຍ, ຍອງຝ້າຍ, ຍອງຝ້າຍສຳຣັບແຍ່ຫູ,
- ນ້ຳຫອມທາດັບກິ່ນ,
- ເຄື່ອງໃຊ້ແລະອຸປະກອນອະນາມັຍປະຈຳວັນ, ເຈັ້ຍເຈັດມື, ແລະອຸປະກອນ ດັ່ງກ່າວຕ່າງໆ,

- ຜ້າເຊັດຕົວ, ຜ້າລ້າງໜ້າ, ເຄື່ອງນຸ່ງໃນໂຮງພຍາບານ.
- ຢາຕ່າງໆຈາກຮ້ານຂາຍຢາ,
- ການບໍຣິການອະນາມັຍສຳລັບຜົມແລະເລັບ,
- ການອາບນ້ຳ ແລະ
- ການຊັກເຄື່ອງນຸ່ງ.

**ທ່ານອາດຈະຖືກປັບຄ່າສຳລັບສິ່ງຂອງແລະການບໍຣິການທີ່ທາງເມດີເຄດແລະ ເມດີແຄ ບໍ່ຮັບຈ່າຍໃຫ້ ດັ່ງຕໍ່ໄປນີ້:**

- ໂທຣສັບ, ທໍຣະທັດ, ວິທະຍຸໃນຫ້ອງຂອງທ່ານ,
- ເຄື່ອງໃຊ້ເພື່ອຄວາມສະດວກສ່ວນຕົວຂອງທ່ານ ລວມທັງ ເຄື່ອງໃຊ້ ສຳຣັບ ສູບຢາ, ເຂັມຄຸມ, ເຄື່ອງເອ້ຫຼືຂອງຫຼິ້ນຕ່າງໆ,ແລະຂນົມຕ່າງໆ,
- ເຄື່ອງແຕ່ງເພື່ອ ເຄື່ອງເສີມສວຍພ້ອມເຄື່ອງແຕ່ງຕົວແລະການບໍຣິການ ດັ່ງກ່າວ ຫຼື ຫຼາຍກວ່າ ຈຳນວນ ທາງເມດີເຄແລະເມດີແຄຈະຈ່າຍໃຫ້,
- ເຄື່ອງນຸ່ງຫົ່ມສ່ວນຕົວ,
- ປຶ້ມອ່ານຕ່າງໆສ່ວນຕົວ,
- ຂອງຂັວນ, ດອກໄມ້, ຕົ້ນໄມ້,
- ລາຍການສັງຄົມແລະການລິ້ນເລີງຕ່າງໆທີ່ຈັດຂຶ້ນນອກຂອບເຂດ ກິດຈະກັມ ທີ່ບົ່ງໄວ້ໃນໂຄງການ,
- ການບໍຣິການສ່ວນຕົວພິເສດເຊັ່ນການວ່າຈ້າງນາງພຍາບານ ຫຼືຜູ້ມາໃຫ້ ການ ຊວ່ຍເຫຼືອຕື່ມຂຶ້ນອີກ,
- ຫ້ອງສ່ວນຕົວພິເສດ, ຍົກເວັ້ນແຕ່ວ່າເມື່ອຈຳເປັນໃນການປິ່ນປົວພິເສດ (ຕົວຢ່າງ, ເພື່ອໃຊ້ເປັນຫ້ອງແຍກ ປ້ອງກັນການຕິດຕໍ່ເຊື້ອໂຣກ) ແລະ
- ອາຫານກະຕຽມພິເສດ ຫຼືອາຫານພິເສດແທນທີ່ຈະແມ່ນອາຫານ ທຳມະດາ ທົ່ວໆໄປ ໂດຍຈາກທາງສຖານທີ່ມີໄວ້ໃຫ້.

21. **ໜັງສືຕັກເຕືອນກ່ອນຕັດເມດີເຄ.** ຖ້າຫາກທ່ານໄດ້ຮັບການຊ່ວຍເຫຼືອ ເມດີເຄດ, ທາງສຖາທີ່ເບິ່ງແຍງ ຕ້ອງເຕືອນບອກໃຫ້ທ່ານຊາບວ່າ ເມື່ອໃດບັນຊີ ເງິນຂອງທ່ານ ຫາກມີ $200 ຫຼື ຕໍ່າກວ່າຄ່າສິນບັດທາງ SSI ໄດ້ກໍານົດໄວ້ ສໍາຮັບຕໍ່ບຸກຄົນນື່ງ, ແລະຖ້າຫາກມີຈໍານວນເງິນໃນບັນຊີ ຣວ່ມກັບຄ່າຊັບ ສິນບັດທີ່ບໍ່ຖືກຍົກເວັ້ນ ຈູບ ຈໍານວນກໍານົດຂອງເອສເອສໄອ ຕໍ່ບຸກຄົນຜູ້ນື່ງແລ້ວ ທ່ານອາດຈະໝົດ ສິດໄດ້ ຮັບການ ຊ່ວຍເຫຼືອເມດີເຄດ ຫຼືເອສເອສໄອ.

22. **ກ້ອນເງິນສ່ວນຕົວ.** ທ່ານໃຫ້ມີສິດທີ່ກໍາກັບເງິນຂອງທ່ານໄດ້ ອາດບໍ່ຈໍາເປັນ ຕອ້ງ ນໍາເງິນເຂົ້າມາຝາກໄວ້ນໍາ ທາງສຖານທີ່ເບິ່ງແຍງ. ໃນເມື່ອທ່ານໄດ້ມອບ ອະນຸຍາດ ເປັນລາຍລັກອັກສອນ ທ່ານກໍມີສິດ (ຖ້າຫາກຈະຝາກໄວ້ ໃນສຖານທີ່ ເບິ່ງແຍງ) ຂໍໃຫ້ສະຖານທີ່ຮັກສາໃຫ້ ປອດພັຍແລະເກັບໄວ້ໃນບັນຊີຕ່າງໆຫາກ. ເງິນສ່ວນຕົວທີ່ມີຫຼາຍ $50 ຈະຕ້ອງໄດ້ນໍາເຂົ້າຝາກໄວ້ໃນສຖານທີ່ເບິ່ງແຍງໃນບັນຊີທີ່ ຄິດຄ່າດອກເບັ້ຍໃຫ້ໂດຍແຍກອອກຈາກ ບັນຊີໃຊ້ ຈ່າຍຂອງ ສຖານທີ່ ເບິ່ງແຍງ. ສຖານທີ່ເບິ່ງແຍງອາດຈະຝາກກ້ອນເງິນຂອງທ່ານທີ່ຕໍ່າກວ່າ $50 ໄວ້ໃນບັນຊີ ບໍ່ໄລ່ ດອກເບັ້ຍ, ບັນຊີເງິນຫຍ່ອຍ ຫຼືບັນຊີໄລ່ດອກ ເບັ້ຍກໍໄດ້. ທ່ານຄວນຂໍເບິ່ງ ລາຍບັນຊີ ເງິນຂອງທ່ານ ໄດ້ຕາມ ຄວາມຮ້ອງຂໍຫຼືຜູ້ຕ່າງໜ້**າຂອງທ່ານ ທຸກໆສາມ ເດືອນຕ້ອງລາຍງານ**ໃຫ້ທ່ານຢ່າງນ້ອຍບໍ່ຕໍ່າກວ່າ ຖ້າຫາກ ທ່ານເສັຍຊີວິດກ່ອນ ກ້ອນເງິນຂອງທ່ານ ພ້ອມລາຍບັນຊີຄືບຖ້ວນຕ້ອງຖືກລາຍງານພາຍໃນ 30 ວັນ. ຕໍ່ຜູ້ຕ່າງ ໜ້າທ່ານຫຼືຜູ້ຖືກມອບໝາຍກໍາກັບຊັບ ສິນບັດຂອງທ່ານ.

**23. ການທົດລອງຄົ້ນຄ້ວາ.** ທ່ານມີສິດປະຕິເສດຕໍ່ການເຂົ້າຣວ່ມໃນການທົດລອງ ວິໃຈຄົ້ນຄວ້າຕ່າງໆ.

**24. ການປ່ຽນຫ້ອງຫຼືການປ່ຽນເພື່ອນຣວ່ມຫ້ອງ.** ທ່ານມີສິດທີ່ຖືກແຈ້ງໃຫ້ຊາບ ຖ້າຫາກຈະມີການປ່ຽນຫ້ອງ ຫຼືເພື່ອນຣວ່ມຫ້ອງ. **ຖ້າຫາກຫ້ອງຂອງທ່ານ ຫາກ**

**ຖືກປ່ຽນ, ທ່ານກໍຄວນຈະຕ້ອງໄດ້ຖືກບອກໃຫ້ຮູ້ກ່ອນລ່ວງໜ້າ 7 ວັນ ເປັນລາຍ ລັກອັກສອນ.** ທ່ານຄືງບໍ່ຈຳເປັນປ່ຽນຫ້ອງກ່ອນທ່ານຈະໄດ້ຮັບການຊ່ວຍເຫຼືອ ເມດິແຄ.

**25. ການເກັບຮັກສາບັນທຶກໄວ້ເປັນເຣື່ອງສ່ວນຕົວ.** ທ່ານມີສິດປ້ອງກັນບັນທຶກຊີວິ ປະຫວັດແລະການບັນທຶກແພດ ຂອງທ່ານ. ເປັນເຣື່ອງສ່ວນຕົວແລະເຣື່ອງລັບ ທ່ານ ອາດຈະເຫັນດີຫຼືປະຕິເສດເປີດປ່ອຍນຳເອົາເຣື່ອງລາວສ່ວນຕົວ ຫຼືບັກທຶກ ແພດ ຂອງທ່ານ ໃຫ້ຄົນຂ້າງນອກສຖານທີ່ເບິ່ງແຍງ ເວັ້ນເສັຍແຕ່ທ່ານ ຈະຖືກ ຍົກຍ້າຍ ເຂົ້າໄປຮັບ ການ ປິ່ນປົວ ຮັກສາ ຢູ່ໃນສຖານທີ່ອື່ນ ຫຼືອາດຈະ ແມ່ນເປັນ ຄຳສັ່ງ ທີ່ຖືກຕ້ອງຈາກທາງກົດໝາຍ ຫຼື ຕາມສັນຍາ ຮັບຈ່າຍ ຄ່າປິ່ນປົວ ມີທີສາມ ເທົ່ານັ້ນ **ທ່ານຈະຕ້ອງຖືກແຈ້ງໃຫ້ຊາບ ໃນເມື່ອມີຄົນຈາກທາງຂ້າງນອກ ສຖານ ທີ່ເບິ່ງແຍງ ມາຂໍເອົາບັນທຶກສ່ວນຕົວ. ທ່ານຈະສາມາດເລືອກເອົາ ບຸກຄົນໄປຮ່ວມຟັງ ນຳທ່ານ ໃນເມື່ອຫາກຖືກເອີ້ນໄປ ສຳພາດ ກ່ຽວບັນທຶກຫຼືຂໍ້ມູນຕ່າງໆ.**

**26. ການຮ້ອງທຸກ.**ທ່ານມີສິດສະເນີຄຳຮ້ອງທຸກແລະຄວາມພຍາຍາມຮີບດ່ວນຈາກ ສຖານທີ່ເບິ່ງແຍງໃນການແກ້ໃຂ ຕໍ່ຄຳຮ້ອງທຸກຂອງທ່ານຕາມນະໂຍບາຍ ເປັນລາຍ ລັກອັກສອນຂອງສຖານທີ່ເບິ່ງແຍງ. ທ່າ**ນສາມາດອອກປາກຮ້ອງທຸກແລະ ສເນີ ຂໍ້ຄິດເຫັນຂອງທ່ານ ເພື່ອປ່ຽນແປງໂດຍປັດສະຈາກການຂັດຂືນ, ການລົບກວນ, ການບີບບັງຄັບ, ການລົບ ກວນ, ການຈຳແນກຜິວພັນ, ຫຼື ການບາດໝາງຕຣອດ ທັງການ ຂົ່ມຂູ່ໄລ່ ອອກຈາກ ສຖານທີ່ເບິ່ງແຍງ.**

ທ່ານມີສິດທີທີ່ຈະປະກອບໜັງສືຮ້ອງທຸກໄປຍັງຫ້ອງການຮັບຄຳຕຳນິຕິຊົມຂອງ ສາທາຣະນະສຸກ ຫຼື ສຳນັກງານ ສາທາຣະນະສຸກຂອງຣັຖທ່ານ, ຫຼືທີ່ຫ້ອງການທີ່ມີ ໜ້າທີ່ ຮັບຜິດຊອບ ຮັບຟັງການວິຈາຣແລະຂໍ້ຄິດເຫັນຂອງປະຊາຊົນ ທົ່ວໄປຂອງ ຜູ້ອາວຸໂສຣັຖມິນນີໂຊຕາ, ທີ່ຢູ່ຂອງເພິ່ນແລະໂທຣສັບຂອງເພິ່ນ ແມ່ນຢູ່ທີ່ດ້ານຫຼັງສຸດ ຂອງເອກກະສານນີ້.

**27. ການບໍລິການຕອບສນອງກັບຄວາມຕ້ອງການ. ທ່ານມີສິດທີ່ຈະໄດ້ຮັບການຕອບສນອງ ອັນຮີບດ່ວນ ແລະ ສົມເຫດສົມຜົນຕໍ່ຄໍາຖາມ ຫຼື ການຂໍຮ້ອງ ຂອງທ່ານ.**

**28. ການກວດຜົນຂອງການສໍາຣວດຕ່າງໆ.** ທ່ານມີສິດທີ່ຈະໄດ້ກວດຜົນຂອງການສໍາຣວດທີ່ຜ່ານມາມໍ່ໆນີ້ຂອງທາງສຖານທີ່ໂດຍນັກສໍາຣວດ ຣັຖບານກາງແລະຣັຖບານແຫ່ງຣັຖ ຫຼືຈາກສາທາຣະນະສຸກຕ່າງໆຂອງເຂດທ້ອງຖິ່ນພ້ອມແຜນການທີ່ ຖືກສເນີເພື່ອແກ້ໄຂພາຍໃນສຖານທີ່ມີສິດໄດ້ຮັບ ຂໍ້ມູນເຫຼົ່ານີ້ຈາກທາງ ອົງກອນຕ່າງໆທີ່ເປັນຕົວແທນ ຂອງບັນດາຜູ້ທີ່ຢູ່ອາສັຍຢູ່ສຖານທີ່ ເບິ່ງແຍງແລະໃຫ້ມີໂອກາດ ຕິດຕໍ່ຫາ ອົງກອນຕ່າງໆເຫຼົ່ານີ້.

**29. ການທໍາງານ.** ທ່ານມີສິດປະຕິເສດ ທໍາງານໃຫ້ສຖານທີ່ເບິ່ງແຍງ.

**30. ຈົດໝາຍ.** ທ່ານມີສິດສ່ວນຕົວໃນການຕິດຕໍ່ທາງດ້ານການສົ່ງຈົດໝາຍອອກແລະຕຣອດການຮັບຈົດໝາຍທີ່ຖືກຕ້ອງ ຕາມເວລາ ຊຶ່ງຈົດໝາຍບໍ່ຖືກເປີດແລະມີບ່ອນຊື້ສແຕັມ ເຈັ້ຍຈົດໝາຍ ແລະອຸປະກອນປະກອບການ ໄປສນີອື່ນໆອີກ ຊຶ່ງຈະແມ່ນທ່ານເອງເປັນຜູ້ຈ່າຍ.

**31. ສິດທິໃນການຢ້ຽມຢາມແລະຕິດຕໍ່ອື່ນໆ.** ທ່ານມີສິດຢ້ຽມຢາມດວ້ຍແລະຕິດຕໍ່ພົວພັນກັບ ບຸກຄົນຫຼືອົງກອນ ຕ່າງໆໄດ້ດັ່ງຕໍ່ໄປນີ້:

- ຕົວແທນຂອງຣັຖບານ,
- ນາຍແພດຂອງທ່ານ,
- ພນັກງານທີ່ໃຫ້ເບິ່ງແຍງຄວາມເປັນທັມ ເປັນ ລະຍະຍາວນານ, **ແລະພນັກງານປ້ອງກັນສິດທິແລະອົງການສນັບສນູນຕ່າງໆ,**
- ທາງອົງການຮັບຜິດຊອບປົກປ້ອງສນັບສນູນຄົນເສັຍອົງຄະຫຼືເສັຍຈິດ,
- ສະມາຊິກໃນຄອບຄົວຂອງທ່ານຫຼື ຍາດພີ່ນ້ອງຂອງທ່ານ, ແລ້ວແຕ່

ທ່ານຈະໄຊ້ ສິດທິຂອງທ່ານປະຕິເສດ ຫຼືຖອນຄຳ ອະນຸຍາດ ຕາມທ່ານ ເຫັນເໝາະສົມ,

- ແລະຜູ້ອື່ນໆທີ່ເຂົ້າມາ ຢ້ຽມຢາມ ຕາມຄຳອະນຸຍາດ ຂອງທ່ານ, ລວມທັງຕົວແທນຂອງທ່ານ, ຜູ້ອື່ນໆທີ່ໃຫ້ການ ບໍຣິການ ທາງການແພດ, ທາງສັງຄົມ, ກົດໝາຍ, ແລະການບໍຣິການ ອື່ນໆ ອີກແກ່ທ່ານຍົກເວັ້ນແຕ່ຈະມີ ການຫ້າມປາມອັນສົມເຫດຜົນ ແລະ ຍົກເວັ້ນແຕ່ ທ່ານ ຈະປະຕິເສດຫຼື ຖອນຄຳອະນຸຍາດ ຕາມເຫັນເໝາະສົມ.

**32. ການຕິດຕໍ່ສ່ວນຕົວ**. ທ່ານມີສິດພົບພໍ້ແລະເວົ້າລົມກັບ ບຸກໃດ ໄດ້ຕາມຄວາມ**ຕ້ອງຂອງທ່ານ. ທ່ານມີສິດອອກໄປຈາກສຖານທີ່ຕາມຄວາມປະສົງ ຂອງທ່ານ.**

**33. ໂທຣສັພ**. ທ່ານມີສິດໃຊ້ໂທຣສັພສ່ວນຕົວຂອງທ່ານ, ໂດຍຈະບໍ່ມີໃຜລັກຟັງ ແລະສອດຮູ້ສອດເຫັນ.

**34. ສັພສິນສ່ວນຕົວ**. ທ່ານມີສິດທີ່ຈະໄດ້ເກັບກຳແລະໄຊ້ຂອງຫວງແຫນຂອງທ່ານ ລວມທັງເຄື່ອງເອ້ແລະເຄື່ອງໃຊ້ ທີ່ເໝາະສົມ ຕາມທີ່ຈະມີບ່ອນໄວ້, ເວັ້ນເສັຍ ແຕ່ສິ່ງເຫຼົ່ານັ້ນ ຈະແຕະຕ້ອງແລະລົບກວນເຖິງສິດທິ, ຄວາມປອດພັຍ ແລະສຸຂພາບ ຂອງຜູ້ອື່ນ. **ທາງສຖານທີ່ນີ້ອາດຈະມີຕູ້ເກັບມ້ຽນສູນກາງໃສ່ກຸນແຈ ຫຼືອາດມີ ຕູ້ມ້ຽນ ສ່ວນຕົວໃສ່ກູນ ແຈເພື່ອເກັບກຳເອົາເຄື່ອງຂອງທີ່ມີຄ່າຂອງທ່ານ.**
ທາງສຖານທີ່ເບິ່ງແຍງຈະຮັບຜິດຊອບຊ່ວຍປ້ອງກັນ ໃຫ້ສົມເຫດສົມຜົນ ເຊັ່ນ ໃຫ້ ຄຳແນະນຳແກ່ທ່ານແລະສະມາຊິກ ໃນຄອບຄົວໃຫ້ຮູ້ກ່ຽວກັບ ການສ່ຽງທີ່ຈະນຳ ເອົາເຄື່ອງຂອງ ມີຄ່າເຂົ້າມາໃນສຖານທີ່ນີ້, ແລະເຮັ່ອງໝາຍຊື່ ໃສ່ເຄື່ອງໃຊ້ທຸກຢ່າງຂອງທ່ານ, ຕູ້ມີປະຕູຄົບຖ້ວນ ແລະຈະໄດ້ສືບສວນກ່ຽວເຄື່ອງ ຂອງເສັຍແລະ ຄວາມເສັຍຫາຍເກີດຂື້ນ . **ທາງສຖານທີ່ອາດ ແຕ່ຈະບໍ່ຈຳຕ້ອງໃຊ້ ຄ່າເສັຍຫາຍ ແທນສິ່ງຂອງທີ່ຖືກລັກ.**

**35. ຜູ້ອາສັຍທີ່ແຕ່ງງານແລ້ວຢູ່ສະຖານທີ່ເບິ່ງແຍງ.** ທ່ານມີສິດທີ່ໃຫ້ສາມີ ພັນລະຍາ ຂອງທ່ານຢູ່ຮ່ວມຫ້ອງນຳ ທ່ານໄດ້, ຖ້າເປັນຄວາມປຖນາຂອງ ຄູ່ຮັກ ຂອງທ່ານ. ຖ້າຫາກທ່ານແຕ່ງງານ, **ທ່ານມີສິດໄດ້ຮັບການຢ້ຽມຢາມ ຈາກຄູ່ຮັກ ຂອງທ່ານ ເປັນທາງສ່ວນຕົວ.**

**ຄວາມປະພຶດຂອງຜູ້ອາສັຍແລະຄຳປະກາດຂອງສຖານທີ່**

**36. ການຜູກມັດ.** ທ່ານມີສິດຫຼີກເວັ້ນການຜູກມັດທາງຮ່າງກາຍແລະວັຖຸເຄມີທີ່ມີ ຈຸດປະສົງ ສັ່ງສອນ (ລົງໂທດ) ຫຼືເພື່ອຄວາມສະດວກຊື່ງ ບໍ່ຈຳເປັນຕໍ່ການປິ່ນປົວ ສຸຂພາບ ຂອງຜູ້ທີ່ຢູ່ ອາສັຍ, **ເວັ້ນເສັຍແຕ່ຈະມີເຫດການ ສຸກເສີນແທ້ຈິງ, ຫຼືມີ ໜັງສືອະນຸຍາດຫຼັງຈາກ ການກວດ ໂດຍທ່ານໝໍຂອງທ່ານ ໃນເວລາຈຳກັດ ແລະ ເພື່ອປ້ອງກັນ ບໍ່ໃຫ້ທ່ານ ເຮັດບາດເຈັບໃຫ້ທ່ານເອງຫຼືຜູ້ອື່ນ.**

**37. ສິດທີຂໍຮ້ອງແລະອະນຸຍາດກ່ອນການ ຜູກມັດຮ່າງກາຍ.** ທ່ານມີ ສິດຂໍຮ້ອງໃຊ້ ການ ຜູກມັດຮ່າງກາຍຂອງ ທ່ານໃນການປິ່ນປົວ ກ່ອນຈະອະນຸມັດຄຳຂໍຮ້ອງ ຂອງທ່ານ ນີ້, ທາງສຖານທີ່ຈະຕ້ອງ ອະທິບາຍໃຫ້ທ່ານ ຮູ້ເຖິງພັຍ ອັນຕະຣາຍ ທີ່ອາດ ຈະເກີດຂື້ນ ແລະການປິ່ນປົວແບບອື່ນຕ່າງໆ. ທ່ານໝໍຂອງທ່ານຈະຕ້ອງອອກ ຄຳສັ່ງໃຫ້, ບອກເຖິງ ອາການແພດ, ເຈາະຈົງສະພາບການທີ່ການຜູກມັດຈະຖືກໃຊ້ ອາການເຈັບຂອງ ທ່ານ ອາດສ້າງຄວາມ ເປັນຫ່ວງໃຍເຖິງຄວາມ ປອດພັຍຂອງ ຮ່າງກາຍທ່ານ. ຄວາມຕ້ອງ ການທາງດ້ານຮ່າງກາຍແລະຈິດ, ຫຼື ທ່ານເກີດ ຄວາມຢ້ານລົ້ມ. ທາງສຖານທີ່ເບິ່ງແຍງ ຈະໄດ້ຕິດຕາມເບິ່ງການ ຜູກມັດຮ່າງກາຍ ຂອງທ່ານ ເພື່ອຮັກສາ ສຸຂະພາບ ແລະຄວາມ ປອດພັຍຂອງທ່ານ. ພາຍຫຼັງປຶກສາກັບທ່ານ ສະມາຊິກ ໃນຄອບຄົວ ຂອງທ່ານ ແລະ ທ່ານໝໍ ຂອງທ່ານ, ທາງສະຖານ ທີ່ເບິ່ງແຍງ ກໍຈະປະເມີນຜົນເບິ່ງ ຄວາມຕ້ອງການຜູກ ມັດຂອງທ່ານເປັນລະຍະ. ທ່ານຈະ ຕ້ອງ ໄດ້ເຊັນໃບອະນຸຍາດໃຫ້ທຳການຜູກມັດ.

ຖ້າຫາກທ່ານ ສາມາດ ຈະຕັດສິນໃຈເອງກ່ຽວກັບ ການຮັກສາ ສຸຂພາບຂອງທ່ານ, ມີແຕ່ທ່ານຜູ້ດຽວເທົ່ານັ້ນທີ່ຈະສາມາດ ຂໍຮ້ອງແລະໃຫ້ອະນຸຍາດ ໃນການຜູກມັດຮ່າງ ກາຍ, ຖ້າຫາກທ່ານຕັດສິນໃຈເອງບໍ່ໄດ້ ແມ່ນສະມາຊິກໃນຄອບຄົວ, ຜູ້ປົກຄອງ, ຜູ້ທີ່ຖືກແຕ່ງຕັ້ງ ມາໂດຍຕຣົງ, ຫຼືຜູ້ຮັກສາ ສຸຂພາບຈະຂໍຮ້ອງ ຫຼື ໃຫ້ອະນຸຍາດ ແທນທ່ານໃນເຣື່ອງການຜູກມັດ ຮ່າງກາຍ. ຖ້າຫາກທ່ານ ຢາກຈະໄດ້ສຳເນົາ ກ່ຽວກັບ **ກົດໝາຍໃໝ່ຂອງຣັຖທີ່ບອກກ່າວ**ເຖິງ ເຣື່ອງ ສິດທິຂອງທ່ານນີ້, ມັນເປັນພາກສ່ວນ ຂອງການຍັດຕິວ່າດ້ວຍສິດທິ ຂອງຜູ້ຢູ່ອາສັຍ ຕາມສຖານທີ່ເບິ່ງແຍງ ຊຶ່ງໄດ້ພິມ ແຈກຢາຍໄວ້ຕາມສຖານທີ່ເບິ່ງແຍງ ທົ່ວທຸກແຫ່ງ. ພນັກງານຈະຊ່ວຍຊອກຫາ ເອົາມາໃຫ້ທ່ານໄດ້.

**38. ການທາຣຸນ**. ທ່ານມີສິດອິດສະຣະພາບຕໍ່ການທາຣຸນທາງດ້ານວາຈາ, ເພດ, ຮ່າງກາຍ, ຫຼື ຈິດໃຈ, ການຕົບຕີ ແລະການກັກຂັງ ຕຣອດທັງການປະພຶດບໍ່ຊອບ ທັມ **ດັ່ງທີ່ຣະບຸໄວ້ໃນກົດໝາຍ ດັ່ງກ່າວກ່ຽວການ ປົກປັກຮັກສາ ຜູ້ໃຫ່ຍທີ່ຕົກ ຢູ່ໃນສພາບຄັບຂັນ.**

**39. ການປະພຶດຂອງພະນັກງານໃນສະຖານທີ່ເບິ່ງແຍງ**. ທ່ານມີສິດທີ່ໄດ້ຮັບການສືບສວນ ແລະດຳເນີນການແກ້ໄຂທີ່ເປັນທັມ ແກ່ທ່ານໃນເມື່ອ ທ່ານຖືກທາຣຸນ ເຈັບປວດຕ່າງໆ ຫຼືປະລະທ່ານຍັງມີສິດສະແດງຄຳຕຳນິດຕິຕຽນ ໂດຍແຈ້ງ ໄປຫາ ອົງກອນ ທີ່ຮັບຜິດຊອບທີ່ມີລາຍຊື່ ຢູ່ທ້າຍ ເອກກະສານນີ້.

**ສິດທິການເຂົ້າ, ການຍົກຍ້າຍ ແລະ ການອອກຈາກ ສະຖານທີ່ເບິ່ງແຍງ**

**40. ການຍົກຍ້າຍແລະໃຫ້ອອກຈາກສຖານທີ່**. ທ່ານມີສິດຈະຢູ່ໃນສຖານທີ່ ແລະປະຕິເສດຕໍ່ການຍົກຍ້າຍອອກໄປ ຫຼື ການຖືກໄລ່ອອກໄປ ເວັ້ນເສັຍແຕ່**:**

1. ການຍົກຍ້າຍ ຫຼື ການໃຫ້ອອກໄປຈາກສຖານທີ່ເບິ່ງແຍງ ເປັນຄວາມຈຳເປັນ

ຕໍ່ຄວາມເປັນ ຢູ່ຂອງທ່ານແລະເມື່ອຄວາມຕ້ອງການ ຂອງທ່ານບໍ່ຖືກຕອບ ສນອງຕາມຄວາມ ປະສົງຈາກສຖານທີ່ເບິ່ງແຍງ,

2. ການໃຫ້ຍົກຍ້າຍອອກໄປກໍເຫັນວ່າຖືກຕ້ອງເໝາະສົມ ຖ້າຫາກເຫັນວ່າ ສຸຂພາບຂອງທ່ານຫາກດີຂື້ນພຽງພໍ ແລະທ່ານ ກໍບໍ່ຕ້ອງການບໍຣິການຊ່ວຍ ເຫຼືອຈາກສຖານທີ່ນີ້,
3. ຖ້າຫາກເຫັນວ່າ ຄວາມປອດພັຍຂອງບຸກຄົນໃນສຖານທີ່ເບິ່ງແຍງ ຕົກຢູ່ຂັ້ນ ອັນຕຣາຍ,
4. ຖ້າຫາກເຫັນວ່າບຸກຄົນທີ່ອາສັຍຢູ່ໃນສຖານທີ່ເບິ່ງແຍງຕົກຢູ່ຂັ້ນ ອັນຕະຣາຍ.
5. ທ່ານບໍ່ໄດ້ຈ່າຍເງິນຄ່າສຖານທີ່ເບິ່ງແຍງ, ຫຼັງຈາກທີ່ເຕືອນບອກໃຫ້ຊາບ ຕາມ ເວລາອັນສົມຄວນແລ້ວ (ຫຼືຈ່າຍໂດຍ ເມດີເຄ ຫຼື ເມດີເຄດ) ຫຼື
6. ຖ້າຫາກທາງສຖານທີ່ເບິ່ງແຍງຈະຖືກປິດ.

ເວລາສຖານທີ່ເບິ່ງແຍງສັ່ງຍົກຍ້າຍທ່ານ ຫຼືໃຫ້ອອກໄປຈາກສຖານທີ່ພາຍໃຕ້ ເງື່ອນໃຂແຕ່ (1) ເຖິງ(5) ນັ້ນຕ້ອງໄດ້ ບັນທຶກລົງ ໃນເອກກະສານແພດຂອງທ່ານ. ການບັນທຶກຂໍ້ຄວາມດັ່ງກ່າວ ນີ້ຈະຕ້ອງໄດ້ທຳໂດຍ ທ່ານໝໍຂອງທ່ານ ຖ້າຫາກທ່ານ ຖືກ ຍົກຍ້າຍຫຼືໃຫ້ອອກພາຍໄຕ້ ຫົວຂໍ້ (1) ຫຼື (2) ແລະ ຄຳເຫັນຂອງ ນາຍແພດໃດ ກໍໄດ້ຖ້າ ສັ່ງໃຫ້ ຍົກຍ້າຍຫຼືໃຫ້ພາຍໃຕ້ຄືຫົວຂໍ້ທີ (4).

ກ່ອນທີ່ຈະຖືກຍົກຍ້າຍ ຫຼື ໃຫ້ອອກຈາກສຖານທີ່ເບິ່ງແຍງ, ທາງສຖານທີ່ຈະຕ້ອງ ໄດ້ບອກໃຫ້ທ່ານຮູ້, ພ້ອມດ້ວຍສະມາຊິກໃນຄອບຄົວຫຼື ຕົວແທນຖືກ ຕ້ອງຕາມ ກົດໝາຍ ຖ້າເປັນໄປໄດ້ ເຫດຜົນທີ່ຖືກຍົກຍ້າຍ, ບັນທຶກເຫດຜົນໄວ້ໃນ ເອກກະສານ ບັນທຶກແພດ ຂອງທ່ານ, ພ້ອມທັງໃຫ້ເຫດການດັ່ງ ຕໍ່ໄປນີ້:

(ກ) ວັນທີ່ທ່ານໄດ້ຖືກຍົກຍ້າຍ ຫຼື ໃຫ້ອອກໄປ,

(ຂ) ບ່ອນໃໝ່ທີ່ທ່ານຈະໄປຢູ່

(ຄ) ຊື່, ທີ່ຢູ່ແລະໂທຣສັພ ຂອງຫ້ອງການຮັບຟັງຄຳຮ້ອງທຸກປະຈຳຣັຖ
**ແລະເຂດບ່ອນ** ເບິ່ງແຍງຮັກສາ ໃນລະຍະຍາວ,

(ງ) ຖ້າຫາກທ່ານກາຍເປັນຄົນພິການ, ທີ່ຢູ່ທາງໄປສນີແລະ ເລກໂທຣສັພ ຂອງອົງການ ທີ່ຮັບຜິດຊອບ ແລະປ້ອງກັນຮັກສາແລະໃຫ້ຄຳປຶກສາແກ່ຄົນພິການ

(ຈ) ຖ້າຫາກ ທ່ານ ພິການທາງສຸຂະພາບຈິດ, ທີ່ຢູ່ທາງໄປສນີແລະ ເລກໂທຣສັພ ຂອງອົງການ ທີ່ຮັບຜິດຊອບແລະປ້ອງກັນຮັກສາ ແລະໃຫ້ຄຳປຶກສາແກ່ຄົນພິການ ທາງສຸຂະພາບຈິດ.

(ສ) ຊື່ແລະທີ່ຢູ່ຂອງຫ້ອງການ ຣັຖທີ່ຮັບຜິດຊອບໃນການ ອຸທອນ ໃນການຍົກຍ້າຍ ຫຼືໃຫ້ທ່ານອອກໄປຈາກສຖານທີ່.

**(ຊ) ເອກກະສານ ທີ່ຊີ້ບອກ ວ່າ ທ່ານມີສິດອຸທອໃນເຣື່ອງການຍົກຍ້າຍຫຼືໃຫ້ອອກ ໄປຈາກສຖານທີ່.**

ໜັງສືສັ່ງໃຫ້ຍົກຍ້າຍຫຼື ອອກໄປຈາກສະຖານທີ່ນັ້ນຄວນເຮັດຂຶ້ນ ໄວເທົ່າທີ່ຈະໄວ ໄດ້ ຖ້າການໃຫ້ຍົກຍ້າຍ ຫຼືໃຫ້ອອກໄປຕົກຢູ່ໃນຫົວຂໍ້(1) ຫາ (4) ຕາມທີ່ໄດ້ກ່າວໄວ້ ຂ້າງ ເທິງນີ້ ຫຼື ຖ້າທ່ານຫາກ ບໍ່ໄດ້ຢູ່ໃນສຖານທີ່ ເບິ່ງແຍງເຖິງ 30 ວັນ. ໃນກໍຣະນີ ອື່ນໆ ທັງໝົດນັ້ນ, ຄຳສັ່ງເຕືອນນີ້ຈະຕ້ອງເຮັດຂຶ້ນພາຍໃນ 30 ວັນກ່ອນ ທີ່ທ່ານ ຈະຖືກໃຫ້ ອອກຈາກສຖານທີ່ ຫຼືໃຫ້ຍົກຍ້າຍອອກໄປ. **ທ່ານສາມາດເລືອກ ໄປຢູ່ບ່ອນ ໃໝ່ກ່ອນ ວັນ ກຳນົດ ໃຫ້ຍົກຍ້າຍຫຼືອອກ. ຖ້າຫາກ ທາງສຖານ ທີ່ເບິ່ງແຍງ ມີຄວາມ ປະສົງ ຢາກຈະຍົກຍ້າຍທ່ານໄປຢູ່ຫ້ອງອື່ນ, ທ່ານຈະຕ້ອງໄດ້ຮັບ ໜັງສືແຈ້ງບອກ ລ່ວງໜ້າ ຢ່າງນ້ອຍ 7 ວັນ. ລະຍະ ການແຈ້ງ ບອກໃຫ້ ຮູ້ນັ້ນອາດ ສັ້ນເຂົ້າ ໃນກໍຣະນີ ທີ່ມີ ຄວາມຈຳເປັນ ເໜືອວິສັຍ ຂອງສຖານທີ່ ເບິ່ງແຍງເຊັ່ນ ການເພີ່ມຄົນເຂົ້າມາ ອາສັຍ ໃໝ່, ການປ່ຽນແປງ ການປິ່ນປົວ ຮັກສາຂອງທ່ານ. ສຖານທີ່ຢູ່ອາສັຍ ເບິ່ງແຍງ ຈຳຕ້ອງ ພຍາຍາມສຸດຄວາມ ສາມາດ ຈັດຄົນອາສັຍໃໝ່ເຂົ້າໂດຍບໍ່ມີການ ແຕະຕ້ອງ ຫ້ອງຄົນອາສັຍ ທັງໝົດ.**

ທ່ານມີສິດມີເວລາກະຕຽມພຽງພໍແລະຮັບຄຳແນະນຳເພື່ອຈະໄດ້ຮັບຄວາມປອດພັຍແລະ ຄວາມເປັນລະບຽບຮຽບຮ້ອຍໃນການຍົກຍ້າຍແລະອອກຈາກສະຖານ ທີ່ເບິ່ງແຍງ.

**41. ໜັງສືຄຳສັ່ງກ່ຽວກັບນະໂຍບາຍໃນເຣື່ອງຈອ່ງຫ້ອງໄວ້ແລະການກັບເຂົ້າມາ ຢູ່ຄືນ.** ຖ້າທ່ານຖືກ ຍົກຍ້າຍໂຮງພຍາບານ ຫຼື ຕ້ອງໄດ້ອອກໄປປິ່ນປົວທາງ ກາຍະພາບບຳ ແຫ່ງອື່ນ. ທ່ານມີສິດທີ່ຈະ ກັບຄືນມາ ຢູ່ໃນສຖານທີ່ເບິ່ງແຍງເກົ່າ ຕາມນະໂຍບາຍ ກັບຄືນສຖານທີ່ເດີມ ຖ້າທ່ານໄດ້ຮັບການຊວ່ຍເຫຼືອເມດີເຄດ ຂອງຣັຖ. ແລະພາຍໄຕ້ນະໂຍບາຍຂອງສຖານທີ່ກ່ຽວກັບເວລາກຳນົດຂອງການກັບຄືນມາຢູ່ທີ່ເດີມ ນັ້ນ ຖ້າຫາກທ່ານ ບໍ່ໄດ້ຮັບນຳເມດີແຄດ. ສຖານທີ່ເບິ່ງແຍງຄວນຈະເອົາສຳເນົາ ນະໂຍບາຍ ນີ້ໃຫ້ທ່ານເວລາທ່ານຍົກຍ້າຍຫຼືລາ ອອກ ໄປຮັບການປິ່ນປົວທາງກາຍະພາບ ຢູ່ແຫ່ງຫົນອື່ນ.

ສຖານທີ່ພຍາບານ ຈະຕ້ອງແຕ່ງແລະປະຕິບັດຕາມນະໂຍບາຍຂອງຕົນຊື່ງ ເປັນ ພື້ນຖານ ໃນການກັບເຂົ້າມາຢູ່ອາສັຍ ຄືນໂດຍ ທັນທີເມື່ອມີຕຽງນອນ ຫວ່າງໃນ ຫ້ອງນອນ. ຖ້າຫາກທ່ານຕ້ອງການບໍຣິການ ຈາກສະຖານທີ່ເບິ່ງແຍງ ແລະທ່ານຍັງໄດ້ ຮັບການ ຊວ່ຍ ເຫຼືອເມດີເຄດ ຢູ່ພ້ອມດຽວກັບໄດ້ສີ້ນສຸດການນອນໂຮງໝໍ ຫຼືການປິ່ນປົວ ກາຍະພາບ ພາຍໃຕ້ ແຜນນະໂຍບາຍຂອງຣັຖ.

**42. ໂອກາດໄດ້ຮັບການປິ່ນປົວເບິ່ງແຍງຮັກສາອັນສເມີພາບກັນ.** ສຖານທີ່ຈະຕ້ອງ ໄດ້ແຕ່ງແລະ ປະຕິບັດ ນະໂຍບາຍ ແລະຫຼັກການກ່ຽວກັບການ ຍົກຍ້າຍອອກ ຈາກ ສຖານທີ່, ແລະການບໍຣິການ ໃຫ້ສເມີພາບ ຕໍ່ທຸກຄົນ ໂດຍບໍ່ກ່ຽວວ່າໃຜເປັນຜູ້ໃຊ້ ຈ່າຍ ຄ່າປິ່ນປົວ ພາຍໃຕ້ ແຜນນະໂຍບາຍຂອງຣັຖ. ທາງຣັຖບານ ຈະບໍ່ຈຳເປັນ ໃຫ້ການ ຊວ່ຍ ເຫຼືອບໍຣິການອື່ນໆຕື່ມອີກນອກເໜືອ ຈາກສິ່ງທີ່ບົ່ງໄວ້ໃນແຜນນະໂຍບາຍຂອງຣັຖ.

**ຜູ້ອື່ນໆອີກທີ່ອາດຈະໃຊ້ສິດຂອງທ່ານໄດ້. ຜູ້ປົກຄອງຫຼືຜູ້ທີ່ຖືກແຕ່ງຕັ້ງ ທາງກົດໝາຍ ຫຼືວ່າຜູ້ໃດສົນໃຈເມື່ອຂາດຜູ້ປົກຄອງ ຫຼືຜູ້ຖືກແຕ່ງຕັ້ງ ຈາກທາງ ກົດໝາຍ ອາດຈະ ໃຊ**

້ສິດທິເຫຼົ່ານີ້ໃນນາມ ຂອງທ່ານ. ຜູ້ທີ່ສົນໃຈອາດຈະໃຊ້ສິດນີ້ໃນນາມ ຂອງທ່ານ, ຖ້າຫາກ ທ່ານມີຜູ້ປົກຄອງ, ຜູ້ຖືກແຕ່ງ ຕັ້ງໃຫ້ເປັນຕົວແທນຫຼືຜູ້ຕ່າງໜ້າ ໂດຍ ຜ່ານ ທາງອົງກອນການປົກຄອງ ຫຼືຫ້ອງການ ສານຮັບຜິດຊອບເຣື່ອງ ມູນມໍຣະດົກ ກ່ຽວກັບການເປັນຜູ້ປົກຄອງ ຫຼືຕົວແທນ ທາງກົດໝາຍ. ໃນລະຍະທີ່ລໍຄອຍ ຄໍາຕັດສິນຂອງສານກ່ຽວກັບການໃຊ້ ສິດນີ້ ສຖານທີ່ຮັກສາເບິ່ງແຍງ ອາດຈະໄດ້ທໍາ ຕາມ ຄໍາແນະນໍາ ຂອງຜູ້ປົກຄອງ ຫຼືຜູ້ຖືກແຕ່ງຕັ້ງທາງ ກົດໝາຍ ດວ້ຍເຈຕະນາ ອັນດີ. ເຈຕະນາຂອງກົດໝາຍ ນີ້ແມ່ນ ເພື່ອປ້ອງກັນບໍ່ໃຫ້ຣະເມີດ ອິດສຣະພາບ ຖານພົລະເມືອງແລະດ້ານ ສາສນາ ຂອງທ່ານຕຣອດເຖິງ ສິດໃນການຕັດສິນໃຈຢ່າງ ເອກກະຣາຊ ພ້ອມການ ຮຽນຮູ້ເຖິງ ການຄັດເລືອກ ສິ່ງທີ່ ມີໃຫ້ ແລະທາງສຖານທີ່ ເບິ່ງແຍງຈະຕ້ອງຊຸກຍູ້ແລະ ຊ່ວຍໃຫ້ເຂົ້າ ໃຈພ້ອມໃຊ້ ສິດເຫຼົ່ານີ້ຢ່າງສົມບູນ.

## ສູນກາງຂໍ້ມູນຕິດຕໍ່ສອບຖາມ

ຫ້ອງການຮັບຟັງຄໍາຮ້ອງທຸກສໍາລັບຜູ້ເຖົ້າແກ່ ແຫ່ງຣັຖມິນນີໂຊຕາ
Office of Ombudsman for Older Minnesotans
Metro Square Building
121 East Seventh Place; Suite 410
St. Paul, MN 55101.
1-800-657-3591 ຫຼື (651) 296-0382 (ເຂດເທສບານເມືອງ)
ຫ້ອງການຮັບຟັງຮອ້ງທຸກຂອງຄົນໄຂ້
Office of Health Facility Complaints
P.O.Box 64970
St. Paul, MN 55164-0970
(800) 369-7994 ຫຼື (651) 215-8702 (ເຂດເທສບານເມືອງ)

ກະຊວງສາທາຣະນະສຸກແຫ່ງຣັຖມິນນີໂຊຕາ &
ຜະແນກຄວບຄຸມຂໍ້ຣະບຽບການທາງດ້ານສຖານທີ່ແລະການບໍຣິການ

Minnesota Department of Health
Facility and Provider Compliance Division
85 East Seventh Place, Suite 300
St. Paul, MN 55101.
(651) 215-8700

ໂຄງການຊ່ວຍເຫຼືອຜູ້ພິການດ້ານປະສາດ
ໂຄງການຊ່ວຍເຫຼືອຜູ້ພິການທາງດ້ານສຸຂະພາບຈິດ
The Developmentally Disabled Advocacy Project
The Mental Health Law Project
430 First Avenue North, Suite 300
Minneapolis, MN 55401-1780
1-800-292-4150 ຫຼື (612) 332-1441 (ເຂດເທສບານເມືອງ)

ຄນະກັມມະການສາພາອຳນວຍການແພດສູງສຸດ
Board of Medical Practice
2829 University Avenue SE, Suite 400
Minneapolis, MN 55414-3246
(612) 617-2130

ຜະແນກທົບທວນຄວບຄຸມດູແລການທັງໝົດ
(ສູນສືບສວນຄວບຄຸມການສໍ້ໂກງເຣື່ອງການແພດ)
ສຳນັກງານສຫັວດິການສັງຄົມ ຣັຖມິນນີໂຊຕາ
Surveillance & Integrity Review Services
(Medicaid Fraud Control)

Minnesota Department of Human Service
444 Lafayettee Road
St. Paul, MN 55155-3851
(800) 657-3705 ຫຼື (651) 297-2082 (ເຂດເທສບານເມືອງ)
[ທ່ານຈະສາມາດຝາກຄວາມເວົ້າໄດ້]

ຂໍ້ມູນນີ້ແມ່ນໄດ້ຮັບບໍຣິການ ຈາກທາງກະຊວງສາທາຣະນະສຸກ ແລະປະຊາຄົມຮ່ວມເພື່ອສຖານທີ່ຢູ່ອາສັຍ. ການແປນີ້ແມ່ນໄດ້ຮັບທຶນບໍຣິຈາກ ກະຊວງ ສາທາຣະນະສຸກ ຣັຖມິນນີໂຊຕາ. ສໍາຣັບລາຍລະອຽດເພີ່ມເຕີມ ກ່ຽວກັບເອກກະສານ ທີ່ແປນີ້, ກະຣຸນາຕິດຕໍ່ໄດ້ທີ່ ກະຊວງສາທາຣະນະສຸກ ຣັຖມິນນີໂຊຕາ **Minnesota Department of Health (651) 215-8700.**